ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----0000----

# ກົດລະບຽບສະມາຄົມ
# ສົ່ງເສີມຜູ້ປະກອບກິດຈະການ ວິສາຫະກິດ ຂະໜາດນ້ອຍ ແລະ ກາງລາວ

ກົດລະບຽບຂອງສະມາຄົມສົ່ງເສີມຜູ້ປະກອບກິດຈະການ ວິສາຫະກິດ ຂະໜາດນ້ອຍ ແລະ ກາງລາວ ແມ່ນເອກະສານນິຕິກຳຂອງສະມາຄົມ ທີ່ໄດ້ສ້າງຂຶ້ນໂດຍສອດຄ່ອງກັບດຳລັດນາຍົກລັດຖະມົນຕີ ສະບັບເລກທີ 238/ລບ, ລົງວັນທີ 11 ສິງຫາ 2017 ວ່າດ້ວຍສະມາຄົມ ເພື່ອໃຫ້ອົງການຈັດຕັ້ງຂອງພາກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ ໄດ້ຮັບຮູ້ສະຖານະພາບຄວາມມີຕົວຕົນຂອງສະມາຄົມສົ່ງເສີມຜູ້ປະກອບກິດຈະການ ວິສາຫະກິດຂະໜາດນ້ອຍ ແລະ ກາງລາວ ທີ່ເຄື່ອນໄຫວຖືກຕ້ອງຕາມລະບຽບກົດໝາຍຂອງ ສປປ ລາວ.

ກົດລະບຽບ ຂອງສະມາຄົມສົ່ງເສີມຜູ້ປະກອບກິດຈະການ ວິສະຫະກິດຂະໜາດນ້ອຍ ແລະ ກາງລາວ ປະກອບມີແປດ (8) ໝວດ ແລະ ສາມສິບເຈັດ (37) ມາດຕາ ລາຍລະອຽດຂອງແຕ່ລະໝວດ, ແຕ່ລະມາດຕາ ມີດັ່ງລຸ່ມນີ້:

## ໝວດທີ I :
## ວ່າດ້ວຍຫລັກການລວມ

**ມາດຕາ 01. ຊື່ ຂອງສະມາຄົມ**

ຊື່ສະມາຄົມ: ສະມາຄົມສົ່ງເສີມຜູ້ປະກອບກິດຈະການ ວິສາຫະກິດ ຂະໜາດນ້ອຍ ແລະ ກາງລາວ ເຊິ່ງຂຽນຫຍໍ້ວ່າ (ສນກລ).

ຊື່ເປັນພາສາອັງກິດ: Small and Medium Enterprise Promotion Association of Lao PDR (LAOSME)

**ມາດຕາ 02. ການອະທິບາຍຄຳສັບ**

**1. ຈຸນລະວິສະຫະກິດ:** ໝາຍເຖິງ ວິສະຫະກິດຂະໜາດນ້ອຍສຸດ ທີ່ມີເງື່ອນໄຂດ້ານການຜະລິດສິນຄ້າ, ການບໍລິການທີ່ມີແຮງງານສະເລ່ຍໃນປີແຕ່ 5 ຄົນ ລົງມາ, ມູນຄ່າຊັບສິນທັງໝົດບໍ່ເກີນ ສອງຮ້ອຍ (200) ລ້ານກີບຕໍ່ປີ, ຍອດລາຍຮັບຂອງທຸລະກິດປະຈຳປີບໍ່ເກີນສີ່ຮ້ອຍ (400) ລ້ານກີບຕໍ່ປີ

**2. ວິສະຫະກິດຂະໜາດນ້ອຍ ແລະ ກາງ:** ໝາຍເຖິງຫົວໜ່ວຍທຸລະກິດ ທີ່ໄດ້ຂຶ້ນທະບຽນ ແລະ ການເຄື່ອນໄຫວຢ່າງຖືກຕ້ອງຕາມກົດໝາຍຂອງ ສປປລາວ ໂດຍຖືເອົາຈຳນວນແຮງງານສະເລ່ຍໃນປີ;

**3. ຜູ້ປະກອບກິດຈະການ:** ໝາຍເຖິງ ເຈົ້າຂອງ ຫຼື ຜູ້ບໍລິຫານ ວິສະຫະກິດທີ່ເຮັດທຸລະກິດໃດໜຶ່ງເພື່ອສ້າງລາຍໄດ້ທີ່ເກີດຈາກຫົວຄິດປະດິດສ້າງ, ພູມປັນຍາ ແລະ ມີຄວາມຮັບຜິດຊອບຕໍ່ຄວາມສ່ຽງ ທັງກຳໄລ-ຂາດທຶນດ້ວຍໂຕເອງ;

**4.** ທຸລະກິດ: ໝາຍເຖິງ ການດຳເນີນກິດຈະການໃນຂັ້ນຕອນວຽກງານໃດໜຶ່ງ ຫຼື ທັງໝົດນັບແຕ່ຂອດການຜະລິດໄປຈົນເຖິງຂອດບໍລິການເພື່ອຫາຜົນກຳໄລ ແລະ ຮັບໃຊ້ຜົນປະໂຫຍດລວມຂອງສັງຄົມ;

**5. MSME :** ໝາຍເຖິງ Micro, Small and Medium Enterprise ແປລາວແມ່ນ ຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ ແລະ ກາງ;

**ມາດຕາ 03. ທີ່ຕັ້ງສຳນັກງານຂອງ ສະມາຄົມສົ່ງເສີມ ຜູ້ປະກອບກິດຈະການ ວິສາຫະກິດ ຂະໜາດນ້ອຍ ແລະ ກາງລາວ**

ສຳນັກງານຂອງ ສະມາຄົມສົ່ງເສີມ ຜູ້ປະກອບກິດຈະການ ວິສາຫະກິດ ຂະໜາດນ້ອຍ ແລະ ກາງລາວ. ມີຫ້ອງການ ຕັ້ງຢູ່ ອາຄານ ອິດິຊີ ຕຶກສີຂຽວ ຊັ້ນ 4, ບ້ານ ນາໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ.

**ມາດຕາ 04: ສັນຍາລັກຂອງ ສະມາຄົມສົ່ງເສີມ ຜູ້ປະກອບກິດຈະການວິສາຫະກິດ ຂະໜາດນ້ອຍ ແລະ ກາງລາວ**

**4.1. ກາໝາຍຂອງ ສະມາຄົມສົ່ງເສີມ ຜູ້ປະກອບກິດຈະການ ວິສາຫະກິດ ຂະໜາດນ້ອຍ ແລະ ກາງລາວ**

LAOSME

ກາໝາຍຂອງ ສນກລ ປະກອບມີ ຮູບຕາພະຍຸ ແລະ ອັກສອນພາສາອັງກິດ 6 ໂຕ ຄື L, A, O, S, M ແລະ E, ຮູບຕາພະຍຸທີ່ອອກແບບໃຫ້ມີວົງເດືອນເປັນສູນກາງ, ມີຮູບຄົນເກາະກັນສີ່ດ້ານ, ສີຕາພະຍຸໃຊ້ສີຂາວ, ສີຟ້າ ແລະ ສີແດງ ຄ້າຍຄືທຸງຊາດລາວ, ສີຂອງໂຕໜັງສື L, A, ແລະ O ເປັນສີຟ້າ, S, M ແລະ E ເປັນສີແດງ ໝາຍເຖິງກຸ່ມຜູ້ປະກອບກິດຈະການຈຸນລະທຸລະກິດ, ວິສະຫະກິດຂະໜາດນ້ອຍ ແລະ ກາງ ທີ່ກອມລວມຫົວໜ່ວຍທຸລະກິດທີ່ໄດ້ຂຶ້ນທະບຽນ ແລະ ຍັງບໍ່ທັນໄດ້ຂຶ້ນທະບຽນນຳຂະແໜງການອຸສະຫະກຳ ແລະ ການຄ້າ ຂອງ ສປປລາວ.

ກາໝາຍຂອງ ສນກລ ມີຄວາມໝາຍລວມ ຄື: "ລວມພະລັງຜູ້ປະກອບກິດຈະການທຸລະກິດ, ຈຸນລະວິສະຫະກິດ ຂະໜາດນ້ອຍ ແລະ ກາງລາວ ເພື່ອສົ່ງເສີມ MSME ແລະ ພັດທະນາເສດຖະກິດຂອງຊາດ".

**4.2. ກາປະທັບຂອງ ສະມາຄົມສົ່ງເສີມຜູ້ປະກອບກິດຈະການ ວິສາຫະກິດ ຂະໜາດນ້ອຍ ແລະ ກາງລາວ.**

"ສນກລ" ມີກາປະທັບເປັນຂອງຕົນເອງ ເພື່ອຮັບໃຊ້ໃນການເຄື່ອນໄຫວວຽກງານຕາມລະບຽບການ.

**ມາດຕາ 05. ຈຸດປະສົງການເຄື່ອນໄຫວຂອງ ສະມາຄົມສົ່ງເສີມ ຜູ້ປະກອບການກິດຈະການ ວິສາຫະກິດຂະໜາດນ້ອຍ ແລະ ກາງລາວ**

ສະມາຄົມສົ່ງເສີມ ຜູ້ປະກອບກິດຈະການ ວິສາຫະກິດ ຂະໜາດນ້ອຍ ແລະ ກາງລາວ ແມ່ນອົງການຈັດຕັ້ງສັງຄົມຂອງຫົວໜ່ວຍທຸລະກິດ, ສ້າງຕັ້ງຂຶ້ນໂດຍມີຈຸດປະສົງ:

- ເຕົ້າໂຮມກັນຂອງບັນດາຜູ້ປະກອບກິດຈະການທຸລະກິດຂະໜາດຈຸນລະ, ຂະໜາດນ້ອຍ ແລະ ກາງ ໃນ ສປປລາວ ເພື່ອສົ່ງເສີມສ້າງຄວາມເຂັ້ມແຂງ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ທັງເປັນການເພີ່ມກາລະໂອກາດດ້ານທຸລະກິດ, ແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ຮ່ວມມືກັນຢູ່ພາຍໃນ, ພາກພື້ນ ແລະ ສາກົນ ໂດຍມີການປະສານງານຢ່າງໃກ້ສິດກັບຂະແໜງການທຸລະກິດ, ອົງການຈັດຕັ້ງພາກລັດ ແລະ ອົງການຈັດຕັ້ງສາກົນ;
- ເປັນອີກພາກສ່ວນໜຶ່ງທີ່ຊ່ວຍປະກອບສ່ວນເຂົ້າໃນພາລະກິດ ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ມີການຂະຫຍາຍຕົວຢ່າງໝັ້ນຄົງ ແລະ ຍືນຍົງ.

**ມາດຕາ 06: ພາລະບົດບາດຂອງ ສະມາຄົມສົ່ງເສີມ ຜູ້ປະກອບກິດຈະການ ວິສາຫະກິດ ຂະໜາດນ້ອຍ ແລະ ກາງລາວ**

1. ສະມາຄົມສົ່ງເສີມຜູ້ປະກອບກິດຈະການ ວິສາຫະກິດ ຂະໜາດນ້ອຍ ແລະ ກາງລາວ ເຮັດໜ້າທີ່ເຕົ້າໂຮມ ຜູ້ປະກອບກິດຈະການ ແລະ ສົ່ງເສີມທຸລະກິດຂະໜາດຈຸນລະ, ຂະໜາດນ້ອຍ ແລະ ກາງ ທີ່ເຄື່ອນໄຫວດຳເນີນທຸລະກິດໃນ ສປປ ລາວ ຢ່າງຖືກຕ້ອງຕາມລະບຽບກົດໝາຍ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງສະມາຊິກ.

2. ເຮັດໜ້າທີ່ປະສານງານກັບຂະແໜງການທຸລະກິດ, ອົງການຈັດຕັ້ງພາກລັດ, ອົງການຈັດຕັ້ງສາກົນ, ທະນາຄານ, ສະຖາບັນການເງິນຕ່າງໆ ເພື່ອຮ່ວມກັນສ້າງຄວາມເຂັ້ມແຂງໃຫ້ກັບບັນດາສະມາຊິກ;
3. ເຂົ້າຮ່ວມເຄື່ອນໄຫວສ້າງກິດຈະກຳພາຍໃນ, ພາກພື້ນ ແລະ ສາກົນ ເພື່ອສົ່ງເສີມສ້າງຄວາມເຂັ້ມແຂງ ໃຫ້ແກ່ສະມາຊິກຕາມພາລະບົດບາດຂອງຕົນ;
4. ມີບົດບາດໃນການປຶກສາຫາລືບົນພື້ນຖານຄວາມເປັນເອກະພາບ, ໄກ່ເກ່ຍ ແລະ ສຶກສາອົບຮົມ ຖ້າມີຂໍ້ຂັດແຍ່ງ ຫຼື ຄວາມບໍ່ເຂົ້າໃຈກັນທີ່ເກີດຂຶ້ນພາຍໃນສະມາຄົມ ແລະ ສະມາຊິກດ້ວຍກັນ.

**ມາດຕາ 07: ຂອບເຂດສິດຂອງ ສະມາຄົມສົ່ງເສີມ ຜູ້ປະກອບກິດຈະການ ວິສາຫະກິດ ຂະໜາດນ້ອຍ ແລະ ກາງລາວ**

1. ສິດໃນການສະເໜີປະກອບຄຳຄິດຄຳເຫັນຕໍ່ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, ອົງການ ຈັດຕັ້ງຂອງລັດ ເພື່ອສົ່ງເສີມສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກ ແລະ ຜູ້ປະກອບການ MSME;
2. ສິດໃນການຊ່ວຍເຫຼືອ ແລະ ຮັບເອົາການຊ່ວຍເຫຼືອ ຈາກອົງການຈັດຕັ້ງຕ່າງໆທັງພາກລັດ, ພາກທຸລະກິດທັງພາຍໃນ ແລະ ຕ່າງປະເທດ ທີ່ບໍ່ຜິດກັບແນວທາງນະໂຍບາຍ ແລະ ລະບຽບກົດໝາຍຂອງ ສປປ ລາວ;
3. ສິດໃນການຄົ້ນຄ້ວາ, ພັດທະນາ, ຈັດຕັ້ງປະຕິບັດລະບົບສົ່ງເສີມທຸລະກິດ, ຂະຫຍາຍເຄືອຄ່າຍການຄ້າ ແລະ ບັນດາກິດຈະກຳອື່ນໆ ທີ່ເປັນຜົນປະໂຫຍດຕໍ່ສະມາຊິກ;
4. ສິດໃນການຈັດກອງປະຊຸມ, ສຳມະນາ, ຝຶກອົບຮົມ ແລະ ງານກິດຈະກຳຕ່າງໆ ທີ່ເປັນການສົ່ງເສີມສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກ ແລະ ຜູ້ປະກອບການ MSME.

**ມາດຕາ 08: ກິດຈະກຳ ຫຼື ວຽກງານການເຄື່ອນໄຫວຂອງ ສະມາຄົມ ສົ່ງເສີມຜູ້ປະກອບກິດຈະການ ວິສາຫະກິດ ຂະໜາດນ້ອຍ ແລະ ກາງລາວ.**

1. ຈັດສຳມະນາ, ຝຶກອົບຮົມ, ໃຫ້ຄຳປຶກສາ, ພົບປະທຸລະກິດ ແລະ ງານກິດຈະກຳຕ່າງໆ ທີ່ເປັນການສົ່ງເສີມສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກ ແລະ ຜູ້ປະກອບການ MSME ຕາມເງື່ອນໄຂທີ່ເໝາະສົມ;
2. ນຳພາສະມາຊິກພົບປະທຸລະກິດ, ຊອກຫາຕະຫຼາດ ແລະ ແລກປ່ຽນບົດຮຽນ ທັງພາຍໃນ ແລະ ຕ່າງປະເທດຕາມຄວາມອາດສາມາດຂອງຕົນ;
3. ເຕົ້າໂຮມລວບລວມບັນຫາ ແລະ ຂໍ້ສະເໜີຂອງສະມາຊິກ ເພື່ອລາຍງານຕໍ່ພາກສ່ວນທີ່ກ່ຽວຂ້ອງ, ສະພາ ການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງລັດ ເພື່ອພິຈາລະນາແກ້ໄຂ;
4. ປະຕິບັດວຽກງານອື່ນໆ ຕາມກົດລະບຽບ ແລະ ພາລະບົດບາດຂອງຕົນ.

**ມາດຕາ 09: ຂະແໜງການເຄື່ອນໄຫວ**

ສະມາຄົມ ສົ່ງເສີມຜູ້ປະກອບກິດຈະການ ວິສາຫະກິດ ຂະໜາດນ້ອຍ ແລະ ກາງລາວ ແມ່ນສະມາຄົມທີ່ເຄື່ອນໄຫວໃນຂະແໜງເສດຖະກິດ (ອຸດສາຫະກຳ ແລະ ການຄ້າ), ຊຶ່ງບັນດາຄະນະບໍລິຫານ ແລະ ສະມາຊິກຂອງສະມາຄົມດຳເນີນທຸລະກິດຖືກຕ້ອງຕາມກົດໝາຍ.

**ມາດຕາ 10: ຂອບເຂດການເຄື່ອນໄຫວ**

ສະມາຄົມ ສົ່ງເສີມຜູ້ປະກອບກິດຈະການ ວິສາຫະກິດ ຂະໜາດນ້ອຍ ແລະ ກາງລາວ ແມ່ນອົງການຈັດຕັ້ງໜຶ່ງຂອງນັກທຸລະກິດ ທີ່ມີສະມາຊິກ ແລະ ເຄື່ອນໄຫວໃນຂອບເຂດທົ່ວປະເທດ.

## ໝວດທີ II
## ການຈັດຕັ້ງຂອງສະມາຄົມ

**ມາດຕາ 11: ໂຄງປະກອບການຈັດຕັ້ງ**

ໂຄງປະກອບການຈັດຕັ້ງຂອງ ສະມາຄົມ ສົ່ງເສີມຜູ້ປະກອບກິດຈະການ ວິສາຫະກິດ ຂະໜາດນ້ອຍ ແລະ ກາງລາວ ປະກອບດ້ວຍ :

- ຄະນະບໍລິຫານສະມາຄົມ
- ຄະນະກວດກາສະມາຄົມ
- ຄະນະປະຈໍາສະມາຄົມ;
- ທີ່ປຶກສາ ແລະ ສະມາຊິກ.

**1. ຄະນະບໍລິຫານ ສນກລ ປະກອບດ້ວຍ:**

**ກ. ຄະນະປະທານສະມາຄົມປະກອບມີ:**

- ປະທານສະມາຄົມ ຈໍານວນ 1 ທ່ານ
- ຮອງປະທານສະມາຄົມ ຈໍານວນ 4 ທ່ານ

**ຂ. ກໍາມະການສະມາຄົມ ຈໍານວນ 16 ທ່ານ**

**2. ຄະນະກວດກາ ສນກລ ປະກອບມີ :**

- ປະທານກວດກາສະມາຄົມ ຈໍານວນ 1 ທ່ານ (ເລືອກຕັ້ງຈາກຄະນະບໍລິຫານສະມາຄົມ)
- ຮອງປະທານກວດກາສະມາຄົມ ຈໍານວນ 1 ທ່ານ (ເລືອກຕັ້ງຈາກຄະນະບໍລິຫານສະມາຄົມ) ແລະ
- ກໍາມະການກວດກາສະມາຄົມ ຈໍານວນ 1 ທ່ານ (ເລືອກຕັ້ງຈາກສະມາຊິກສະມາຄົມ)

**3. ຄະນະປະຈໍາ ສນກລ ປະກອບມີ:**

- ຫົວໜ້າຄະນະປະຈໍາ, ບັນດາຮອງຫົວໜ້າຄະນະປະຈໍາ, ຫົວໜ້າຫ້ອງການ, ຮອງຫ້ອງການ, ນາຍຄັງ,ຮອງ ນາຍຄັງ ແລະ ກອງເລຂາຄະນະປະຈໍາ (ສາມາດຄັດເລືອກມາຈາກຄະນະບໍລິຫານ ຫຼື ຈັດຫາມາຈາກທາງ ນອກ).

**ມາດຕາ 12: ຄະນະບໍລິຫານສະມາຄົມ**

ຄະນະບໍລິຫານສະມາຄົມ ສົ່ງເສີມຜູ້ປະກອບກິດຈະການ ວິສາຫະກິດ ຂະໜາດນ້ອຍ ແລະ ກາງລາວ ແມ່ນຜູ້ຕາງໜ້າວິສາຫະກິດ MSME ທີ່ຖືກເລືອກຕັ້ງຈາກສະມາຊິກຂອງ ສນກລ, ໂດຍຜ່ານການລົງຄະແນນ ສຽງຂອງສະມາຊິກ.-ຄະນະບໍລິຫານຂອງ ສນກລ ປະກອບມີຊາວເອັດ (21) ທ່ານ ແລະ ຄັດເລືອກຈາກຜູ້ທີ່ໄດ້ ຄະແນນສູງສຸດຕາມລໍາດັບ 1 ຫາ 21.

**ກ. ຂອບເຂດສິດ ຂອງຄະນະບໍລິຫານສະມາຄົມ**

1. ສິດໃນການເຂົ້າຮ່ວມທຸກວາລະກອງປະຊຸມຂອງ ສນກລ ໄດ້ຈັດຂຶ້ນ;
2. ສິດໃນການປະກອບຄໍາຄິດຄໍາເຫັນຕໍ່ທຸກໆກອງປະຊຸມ ຂອງ ສນກລ ທີ່ກ່ຽວພັນເຖິງການສົ່ງເສີມທຸລະກິດ ຂອງຜູ້ປະກອບກິດຈະການ MSME ໃນ ສປປລາວ;
3. ສິດໃນການລົງຄະແນນສຽງເລືອກຕັ້ງຄະນະບໍລິຫານຂອງ ສນກລ;
4. ສິດໃນການໄດ້ຮັບໂອກາດເຂົ້າຮ່ວມກອງປະຊຸມ, ສໍາມະນາ, ກິດຈະກໍາຕ່າງໆ ທີ່ຕິດພັນກັບວຽກງານຂອງ ສະມາຄົມ ທັງພາຍໃນ ແລະ ຕ່າງປະເທດ;
5. ມີສິດຕາມສິດຂອງສະມາຊິກທີ່ໄດ້ກໍານົດໄວ້;
6. ມີສິດຖືກຄັດເລືອກເປັນປະທານ, ຮອງປະທານ, ແລະ ຄະນະປະຈໍາຂອງສະມາຄົມ;

7. ມີສິດສ້າງຕັ້ງເປັນກຸ່ມຍ່ອຍ ຫລື ໜ່ວຍງານສະເພາະກິດຂອງສະມາຄົມ ໂດຍການເຫັນດີຂອງຄະນະປະທານສະມາຄົມ;
8. ມີສິດນຳໃຊ້ການບໍລິການ ຫຼື ຊື້ຜະລິດຕະພັນຂອງ ສນກລ ໃນລາຄາພິເສດຂອງຄະນະບໍລິຫານ.

**ຂ. ໜ້າທີ່ຄວາມຮັບຜິດຊອບ ຂອງຄະນະບໍລິຫານ**

1. ຄະນະບໍລິຫານມີຄວາມຮັບຜິດຊອບຕໍ່ການປະກອບຄຳເຫັນ, ຄົ້ນຄວ້າ ແລະ ລົງຄະແນນສຽງຮັບຮອງແຜນຍຸດທະສາດ, ນະໂຍບາຍຂັບເຄື່ອນແຜນ ວຽກຂອງສະມາຄົມ ເພື່ອເຮັດໃຫ້ພາລະບົດບາດຂອງສະມາຄົມສາມາດດຳເນີນໄປໄດ້ຕາມແຜນການ ແລະ ຕາມວັດຖຸປະສົງເປົ້າໝາຍຂອງສະມາຄົມ;
2. ມີຄວາມຮັບຜິດຊອບປະກອບຄຳເຫັນ, ຄົ້ນຄວ້າ ແລະ ລົງຄະແນນສຽງຮັບຮອງແຜນງານ-ແຜນງົບປະມານປະຈຳປີ ແລະ ປະຈຳສາມ (3) ປີ ໃນກອງປະຊຸມໃຫຍ່ຂອງສະມາຄົມໃນແຕ່ລະໄລຍະ;
3. ມີຄວາມຮັບຜິດຊອບພິຈາລະນາຮັບຮອງແຜນດຳເນີນງານປະຈຳປີທີ່ສະເໜີໂດຍຄະນະປະຈຳ, ແຜນດຳເນີນງານຕ້ອງມີການກຳນົດເປົ້າໝາຍ, ບັນດາກິດຈະກຳ, ງົບປະມານ ແລະ ບັນດາຕົວຊີ້ວັດເພື່ອປະເມີນຜົນສຳເລັດການດຳເນີນງານຂອງ ສນກລ ປະຈຳປີ;

**ຄ. ເງື່ອນໄຂ ແລະ ພັນທະ ຂອງຄະນະບໍລິຫານ**

**1. ຜູ້ທີ່ເປັນຄະນະບໍລິຫານຂອງ ສນກລ ຕ້ອງມີເງື່ອນໄຂຄົບຖ້ວນດັ່ງຕໍ່ໄປນີ້:**

- ເປັນສະມາຊິກຂອງ ສນກລ ມາກ່ອນ;
- ຕ້ອງໄດ້ຮັບການເລືອກຕັ້ງຈາກສະມາຊິກຕາມຄະແນນສຽງ ຫຼື ຈາກການແຕ່ງຕັ້ງ (ສະເພາະສະໄໝທີ່ I) ຫຼື ໄດ້ຮັບການເຫັນດີຕາມມະຕິຂອງກອງປະຊຸມຄົບຄະນະບໍລິຫານ ສນກລ;

**2. ພັນທະຂອງຄະນະບໍລິຫານ ມີດັ່ງຕໍ່ໄປນີ້:**

- ຈ່າຍເງິນຕາມພັນທະຂອງສະມະຊິກທີ່ໄດ້ກຳນົດໄວ້;
- ຈ່າຍເງິນປະກອບສ່ວນຊ່ວຍງົບປະມານ ບໍລິຫານຫ້ອງການແປດແສນ (800,000) ກີບ ຕໍ່ ປີ;
- ເປັນຕົວແບບທີ່ດີໃຫ້ແກ່ສະມາຊິກ;
- ນຳພາສະມາຊິກ ເຄື່ອນໄຫວວຽກງານ ແລະ ກິດຈະກຳຂອງສະມາຄົມ;
- ຊ່ວຍເຫຼືອ ຄະນະບໍລິຫານ ແລະ ສະມາຊິກຂອງ ສນກລ ດ້ວຍກັນ;
- ຕາງໜ້າໃຫ້ແກ່ ສນກລ ໃນການເຜີຍແຜ່ນະໂຍບາຍ ແລະ ແຜນງານຂອງ ສວນກ ພ້ອມເຮັດວຽກລະດົມສະມາຊິກໃໝ່;
- ຕາງໜ້າໃຫ້ແກ່ ສນກລ ໃນການຊອກຫາແຫຼ່ງທຶນຈາກພາຍໃນ ແລະ ສາກົນເພື່ອສະໜັບສະໜູນກິດຈະກຳ ແລະ ໂຄງການຂອງ ສນກລ.

**ງ. ຂໍ້ຫ້າມຂອງຄະນະບໍລິຫານ**

1. ຫ້າມສະແດງທັດສະນະ ແລະ ປະພຶດທີ່ເປັນການລະເມີດ ຫລື ຕ້ານກັບແນວທາງ, ມະຕິ-ຄຳສັ່ງ ແລະ ລະບຽບກົດໝາຍຂອງ ສປປ ລາວ.
2. ຫ້າມສວຍໃຊ້ສິດອຳນາດ, ຖານະຕຳແໜ່ງ, ໜ້າທີ່ຂອງຕົນ ຫຼື ແອບອ້າງຊື່ສຽງຂອງບຸກຄົນອື່ນເພື່ອຜົນປະໂຫຍດຂອງຕົນ ແລະ ຄອບຄົວ.
3. ຫ້າມຄອບຄອງນຳໃຊ້ຊັບສິນຂອງສະມາຄົມເພື່ອປະໂຫຍດສ່ວນຕົວໂດຍບໍ່ຖືກຕ້ອງ.

**ຈ. ການຍົກຍ້າຍ ແລະ ການສິ້ນສຸດຂອງຄະນະບໍລິຫານ**

1. ກໍລະນີຄະນະບໍລິຫານຖືກຍົກຍ້າຍໄປປະຕິບັດໜ້າທີ່ຢູ່ຕ່າງປະເທດ ຫຼື ຢູ່ຕ່າງແຂວງກຳນົດໜຶ່ງ (1) ປີຂຶ້ນໄປສາມາດແຕ່ງຕັ້ງເພີ່ມເຕີມໄດ້ ໃນກໍລະນີຄະນະບໍລິຫານລາອອກໃນເວລາດຽວກັນເກີນສິບເອັດ (11) ທ່ານສະມາຄົມຕ້ອງໄດ້ຈັດຕັ້ງເປີດກອງປະຊຸມເລືອກຕັ້ງຄະນະບໍລິຫານສະມາຄົມຂຶ້ນໃໝ່.

2. ຄະນະບໍລິຫານຈະສິ້ນສຸດລົງໃນກໍລະນີດັ່ງນີ້:
- ເສຍຊີວິດ
- ລາອອກ
- ຖືກປະຕິບັດວິໄນ
- ຖືກຍົກຍ້າຍໄປຮັບໜ້າທີ່ໃໝ່
- ບໍ່ສາມາດມາຮ່ວມປະຊຸມ ຫຼື ບໍ່ເຮັດໜ້າທີຂອງຄະນະບໍລິຫານ ເກີນໜຶ່ງ (1) ປີ
- ໝົດສະໄໝຊຸດເກົ່າບໍ່ໄດ້ຮັບເລືອກຕັ້ງໃໝ່.

**ມາດຕາ 13: ໜ້າທີ ແລະ ສິດຂອງຄະນະປະທານ ແລະ ຄະນະປະຈຳສະມາຄົມ**

**ກ. ໜ້າທີ່ ແລະ ສິດ ຂອງຄະນະປະທານ**

ຄະນະປະທານ ປະກອບມີ ປະທານໜຶ່ງ (1) ທ່ານ ແລະ ຮອງປະທານສີ່ (4) ທ່ານ. ຄະນະປະທານຄັດເລືອກຈາກການສະເໜີໃນກອງປະຊຸມຄະນະບໍລິຫານຄັ້ງປະຖົມມະລືກໃນແຕ່ລະສະໄໝ ໂດຍການເຫັນດີຕາມສຽງສ່ວນຫຼາຍຂອງຄະນະບໍລິຫານ.

❖ **ໜ້າທີ່ ແລະ ສິດ ຂອງປະທານ**

1. ປະທານມີໜ້າທີໃນການແບ່ງປັນຄວາມຮັບຜິດຊອບໃນການນຳພາສະມາຄົມໃນແຕ່ລະຂົງເຂດ ຫຼື ແຜນງານຂອງສະມາຄົມໃຫ້ແກ່ຮອງປະທານ ແລະ ຄະນະປະຈຳຂອງສະມາຄົມ;
2. ຊີ້ນຳ, ນຳພາການຈັດຕັ້ງຜັນຂະຫຍາຍ, ປະຕິບັດແຜນຍຸດທະສາດ ແລະ ນະໂຍບາຍການພັດທະນາສະມາຄົມ ແລະ ສະມາຊິກໃນແຕ່ລະໄລຍະໃຫ້ປະກົດຜົນເປັນຈິງ;
3. ຊຸກຍູ້ຕິດຕາມ ແລະ ກວດກາການເຄື່ອນໄຫວວຽກງານພາຍໃນສະມາຄົມ ແລະ ໜ່ວຍງານ;
4. ເປັນຜູ້ຕົກລົງຮຽກໂຮມ ທັງເປັນປະທານກອງປະຊຸມໃຫຍ່, ກອງປະຊຸມປະຈຳປີ ແລະ ກອງປະຊຸມຂອງຄະນະບໍລິຫານ (ໃນກໍລະນີ ປະທານ ບໍ່ຢູ່ ຫຼື ບໍ່ສາມາດເຂົ້າຮ່ວມຫ້ອງປະຊຸມ ຕ້ອງໄດ້ມອບໃຫ້ຮອງປະທານ ເປັນປະທານກອງປະຊຸມແທນ);
5. ສະເໜີປຶກສາຫາລື ແລະ ປະສານສົມທົບວຽກງານສຳຄັນຂອງສະມາຄົມກັບອົງການລັດ ແລະ ອົງການຈັດຕັ້ງອື່ນໆທີ່ກ່ຽວຂ້ອງ;
6. ສະຫຼຸບລາຍງານສະພາບຮອບດ້ານກ່ຽວກັບວຽກງານສະມາຄົມຕໍ່ຄະນະບໍລິຫານ, ສະມາຊິກ ແລະ ຂັ້ນເທິງ;
7. ມີສິດແຕ່ງຕັ້ງ ຫລື ຍົກເລີກຄະນະຍ່ອຍ ຫຼື ໜ່ວຍງານສະເພາະກິດຂອງສະມາຄົມ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມທີ່ໄດ້ກຳນົດໄວ້ໃນລະບຽບ ແລະ ກົດໝາຍ.

❖ **ໜ້າທີ່ ແລະ ສິດ ຂອງຮອງປະທານ**

ຮອງປະທານມີໜ້າທີ່ ແລະ ສິດຊ່ວຍປະທານສະມາຄົມໃນການຈັດຕັ້ງປະຕິບັດໜ້າທີວຽກງານ ແລະ ແຜນງານ ຕາມການແບ່ງປັນຄວາມຮັບຜິດຊອບທີ່ປະທານໄດ້ມອບໝາຍໃຫ້.

ໃນກໍລະນີທີ່ປະທານສະມາຄົມຕິດຂັດ, ຄາວຽກໄປປະຕິບັດໜ້າທີ່ທາງນອກ ຮອງປະທານສະມາຄົມຜູ້ທີ່ຖືກ ມອບໝາຍເປັນລາຍລັກອັກສອນຈາກປະທານເປັນຜູ້ວ່າການແທນ.

**ຂ. ໜ້າທີ່ ແລະ ສິດ ຂອງຄະນະປະຈຳສະມາຄົມ**

ຄະນະປະຈຳ ສນກລ ແມ່ນຖືກແຕ່ງຕັ້ງໂດຍກອງປະຊຸມຄະນະບໍລິຫານສະມາຄົມ ປະກອບມີຫົວໜ້າຄະນະປະຈຳ, ບັນດາຮອງຫົວໜ້າຄະນະປະຈຳ, ຫົວໜ້າຫ້ອງການ, ຮອງຫ້ອງການ, ນາຍຄັງ, ຮອງນາຍຄັງ

ແລະ ກອງເລຂາຄະນະປະຈຳ. ຄະນະປະຈຳສະມາຄົມສາມາດຄັດເລືອກມາຈາກຄະນະບໍລິຫານ ຫຼື ຈັດຫາມາຈາກທາງນອກຕາມເງື່ອນໄຂທີ່ເໝາະສົມຂອງສະມາຄົມ ມີໜ້າທີ ແລະ ສິດດັ່ງຕໍ່ໄປນີ້:

1. ຄະນະປະຈຳມີໜ້າທີເຮັດວຽກບໍລິຫານງານຂອງສະມາຄົມ ແລະ ແກ້ໄຂວຽກງານຂອງສະມາຄົມປະຈຳວັນ, ປະຈຳອາທິດ ແລະ ປະຈຳເດືອນ;
2. ຄະນະປະຈຳຮັບຊອບສ້າງແຜນ, ສະເໜີແຜນ ແລະ ຈັດຕັ້ງປະຕິບັດແຜນກິດຈະກຳ-ງົບປະມານປະຈຳສາມ (3) ປີ ແລະ ປະຈຳປີຂອງສະມາຄົມທີ່ຖືກຮັບຮອງໂດຍກອງປະຊຸມຂອງຄະນະບໍລິຫານສະມາຄົມ.

**ມາດຕາ 14: ຄະນະກວດກາ ແລະ ທີ່ປຶກສາ**

**ກ. ໜ້າທີ່ ແລະ ສິດຂອງຄະນະກວດກາຂອງສະມາຄົມ**

ຄະນະກວດກາ ແມ່ນຖືກຄັດເລືອກຜ່ານກອງປະຊຸມໃຫຍ່ຂອງສະມາຄົມ. ປະທານກວດກາ ແລະ ຮອງປະທານກວດກາ ແມ່ນຄັດເລືອກມາຈາກກອງປະຊຸມຂອງຄະນະບໍລິຫານສະມາຄົມ ສ່ວນກຳມະການກວດກາ ແມ່ນຂັດເລືອກເອົາຈາກສະມາຊິກ ຜູ້ທີ່ຍັງບໍ່ໄດ້ເປັນຄະນະບໍລິຫານຂອງສະມາຄົມເທື່ອ.

1. ຄະນະກວດກາມີໜ້າທີ່ຕິດຕາມປະເມີນຜົນການເຮັດວຽກຂອງຄະນະບໍລິຫານ ສນກລ, ລວມການກວດສອບບັນຊີ, ຖານະການເງິນ, ຄວາມບໍ່ໂປ່ງໃສ ແລະ ລາຍງານໃນກອງປະຊຸມຄົບຄະນະບໍລິຫານ ແລະ ກອງປະຊຸມໃຫຍ່ຂອງ ສນກລ;
2. ດຳເນີນການກວດກາປົກກະຕິ, ກວດກາຕາມແຜນການ ແລະ ກວດກາກະທັນຫັນ;
3. ສະເໜີຕໍ່ພາກສ່ວນກ່ຽວຂ້ອງເພື່ອຈະຍົກເລີກນິຕິກຳການກະທຳທີ່ຂັດກັບລະບຽບກົດໝາຍ;
4. ພົວພັນ, ປະສານສົມທົບ ກັບອົງການກວດກາທີ່ກ່ຽວຂ້ອງຂັ້ນຕ່າງໆໃນການປະຕິບັດວຽກງານ;
5. ສະເໜີວິທີການ ແລະ ມາດຕະການແກ້ໄຂຜົນຂອງການກວດກາຕໍ່ຄະນະບໍລິຫານ ແລະ ຄະນະປະທານ ຫຼື ສະມາຊິກ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ຂ. ສິດ ແລະ ໜ້າທີ່ຂອງທີ່ປຶກສາສະມາຄົມ**

ທີ່ປຶກສາ ສະມາຄົມ ແມ່ນບຸກຄົນທີ່ບໍ່ແມ່ນສະມາຊິກຂອງສະມາຄົມ ແຕ່ເປັນບຸກຄົນພາຍນອກທີ່ຄວາມຮູ້ດ້ານວິຊາສະເພາະ, ມີປະສົບການທາງດ້ານການນຳພາ, ດ້ານການເມືອງ, ດ້ານເສດຖະກິດ, ດ້ານທຸລະກິດ ຫລື ດ້ານຂະບວນການເຮັດກິດຈະກຳໃດນຶ່ງ ທີ່ຄະນະປະທານສະມາຄົມເຫັນດີແຕ່ງຕັ້ງເປັນທີ່ປຶກສາຂອງສະມາຄົມ ທີ່ປຶກສາມີສິດ ແລະ ໜ້າທີ່ດັ່ງຕໍ່ໄປນີ້:

1. ມີສິດເຂົ້າຮ່ວມກອງປະຊຸມໃຫຍ່, ກອງປະຊຸມປະຈຳປີ ແລະ ກອງປະຊຸມສາມັນຂອງຄະນະບໍລິຫານ ສນກລ ຕາມການເຊີນຂອງປະທານສະມາຄົມ;
2. ມີສິດໃນການປະກອບຄຳຄິດເຫັນໃນກອງປະຊຸມ;
3. ມີໜ້າທີໃຫ້ຄຳປຶກສາໃຫ້ແກ່ຄະນະບໍລິຫານ, ຄະນະປະຈຳ ແລະ ຄະນະກວດກາສະມາຄົມ.

## ໝວດທີ III
## ສະມາຊິກຂອງສະມາຄົມ

**ມາດຕາ 15: ສະມາຊິກຂອງ ສະມາຄົມ ສົ່ງເສີມຜູ້ປະກອບກິດຈະການ ວິສາຫະກິດ ຂະໜາດນ້ອຍ ແລະ ກາງລາວ**

ສະມາຊິກຂອງ ສນກລ ມີ ສາມ (3) ປະເພດຄື:

- ສະມາຊິກສາມັນ;
- ສະມາຊິກສະໜັບສະໜູນ;
- ສະມາຊິກກິດຕິມະສັກ;

**ມາດຕາ 16: ເງື່ອນໄຂ ແລະ ສິດຂອງສະມາຊິກສາມັນຂອງ ສນກລ**

**ກ. ເງື່ອນໄຂຂອງສະມາຊິກສາມັນຂອງ ສນກລ**

ສະມາຊິກສາມັນຂອງ ສນກລ ແມ່ນບຸກຄົນຜົນລະເມືອງລາວທີ່ມີອາຍຸກະສຽນແຕ່ ສິບແປດ (18) ປີຂຶ້ນໄປ ທີ່ເປັນຊາວຄ້າຂາຍ, ຜູ້ປະກອບການ MSME ທີ່ເຄື່ອນໄຫວຖືກຕ້ອງຕາມລະບຽບກົດໝາຍ, ມີຄວາມຕື່ນຕົວສະໝັກໃຈເຂົ້າເປັນສະມາຊິກຂອງສະມາຄົມ ແຕ່ຕ້ອງແມ່ນບຸກຄົນທີ່ໄດ້ຂຶ້ນທະບຽນວິສາຫະກິດທີ່ຖືກຕ້ອງສອດຄອງຕາມລະບຽບ ກົດໝາຍ ຂອງ ສປປ ລາວ.

**ຂ. ສິດຂອງສະມາຊິກສາມັນຂອງ ສນກລ**

1. ມີສິດໃນການເຂົ້າຮ່ວມກອງປະຊຸມໃຫຍ່ ຂອງ ສນກລ;
2. ມີສິດໃນການເລືອກຕັ້ງ, ສະໝັກຮັບເລືອກຕັ້ງ ຫຼື ແຕ່ງຕັ້ງ ເຂົ້າເປັນຄະນະບໍລິຫານຂອງ ສນກລ ແລະ ມີສິດອອກຄະແນນສຽງລົງມະຕິຕ່າງໆໃນກອງປະຊຸມຂອງ ສນກລ ໄດ້ໜຶ່ງ (1) ຄະແນນສຽງ;
3. ມີສິດໃນການຮັບຂໍ້ມູນຂ່າວສານທີ່ສຳຄັນ ຂອງ ສນກລ ເພື່ອປະໂຫຍດໃນການດຳເນີນທຸລະກິດ;
4. ມີສິດສະເໜີບັນຫາທີ່ກ່ຽວພັນກັບທຸລະກິດຂອງຕົນເພື່ອໃຫ້ ສນກລ ຊ່ວຍແກ້ໄຂ;
5. ມີສິດສະໝັກໄປຮ່ວມງານ ແລະ ການຝຶກອົບຮົມຕ່າງໆຢູ່ພາຍໃນ ແລະ ຕ່າງປະເທດ ໂດຍຜ່ານ ສນກລ;
6. ມີສິດປະສານສົມທົບ ສນກລ ເພື່ອຊອກຫາຊ່ອງທາງໃນການປະຊາສຳພັນໂຄສະນາທຸລະກິດຂອງຕົນ ສ້າງບົດບາດຂອງຕົນນຳເພື່ອນສະມາຊິກດ້ວຍກັນ ແລະ ເຄືອຂ່າຍຂອງ ສນກລ;
7. ມີສິດນຳໃຊ້ການບໍລິການ ຫຼື ຊື້ຜະລິດຕະພັນຂອງ ສນກລ ໃນລາຄາພິເສດຂອງສະມາຊິກ.

**ມາດຕາ 17: ເງື່ອນໄຂ ແລະ ສິດຂອງສະມາຊິກສະໜັບສະໜູນຂອງ ສນກລ**

**ກ. ເງື່ອນໄຂຂອງສະມາຊິກສະໜັບສະໜູນຂອງ ສນກລ**

ສະມາຊິກສະໜັບສະໜູນຂອງ ສນກລ ແມ່ນ:

1. ບຸກຄົນຜົນລະເມືອງລາວທີ່ມີອາຍຸກະສຽນແຕ່ ສິບແປດ (18) ປີຂຶ້ນໄປ ທີ່ເຄື່ອນໄຫວຖືກຕ້ອງຕາມລະບຽບກົດໝາຍ, ມີຄວາມຕື່ນຕົວສະໝັກໃຈເຂົ້າເປັນສະມາຊິກຂອງສະມາຄົມ ແຕ່ບໍ່ທັນມີມາດຕະຖານເງື່ອນໄຂຄົບຖ້ວນ, ບໍ່ທັນໄດ້ຂຶ້ນທະບຽນວິສາຫະກິດທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ບຸກຄົນຕ່າງປະເທດ ຫຼື ທຸລະກິດຂອງຄົນຕ່າງປະເທດທີ່ດຳລົງຊີວິດ ແລະ ດຳເນີນທຸລະກິດຢູ່ ສປປ ລາວ ແລະ ເຄື່ອນໄຫວຖືກຕ້ອງຕາມລະບຽບກົດໝາຍ ທີ່ມີຄວາມສົນໃຈເຂົ້າຮ່ວມເຄື່ອນໄຫວນຳ ສນກລ.

ຜູ້ປະກອບການທີ່ຍັງບໍ່ທັນໄດ້ຈົດທະບຽນວິສາຫະກິດນຳຂະແໜງ ອຸດສາຫະກຳ ແລະ ການຄ້າ ຕ້ອງໄດ້ຈົດທະບຽນພາຍໃນໜຶ່ງ (1) ປີ ພາຍຫຼັງທີ່ໄດ້ສະໝັກເຂົ້າເປັນສະມາສິກສະໜັບສະໜູນຂອງ ສນກລ ແລ້ວ.

(ໃນກໍລະນີສະມາຊິກດັ່ງກ່າວຍັງບໍ່ສາມາດຂຶ້ນທະບຽນວິສາຫະກິດໄດ້ຕາມທີ່ໄດ້ກຳນົດໄວ້, ສະມາຄົມ ສນກລ ຈະພິຈາລະນາຕໍ່ສະຖານະຂອງສະມາສິກເປັນແຕ່ລະກໍລະນີໄປ).

**ຂ. ສິດຂອງສະມາຊິກສະໜັບສະໜູນຂອງ ສນກລ**

ສະມາຊິກສະໜັບສະໜູນຂອງ ສນກລ ແມ່ນປະຕິບັດຕາມສິດທີ່ສະມາຊິກສາມັນທຸກຂໍ້ທີ່ລະບຸໄວ້ ໃນມາດຕາ 16 ຍົກເວັ້ນຂໍ້ ຂ.2 ບໍ່ມີສິດໃນການເລືອກຕັ້ງ, ສະໝັກຮັບເລືອກຕັ້ງ ຫຼື ແຕ່ງຕັ້ງ ເຂົ້າເປັນຄະນະບໍລິຫານຂອງ ສນກລ ແລະ ບໍ່ມີສິດອອກຄະແນນສຽງລົງມະຕິຕ່າງໆໃນກອງປະຊຸມຂອງ ສນກລ

**ມາດຕາ 18: ເງື່ອນໄຂ ແລະ ສິດຂອງສະມາຊິກກິດຕິມະສັກຂອງ ສນກລ**

**ກ. ເງື່ອນໄຂຂອງສະມາຊິກກິດຕິມະສັກຂອງ ສນກລ**

ສະມາຊິກກິດຕິມາສັກ ແມ່ນ ບຸກຄົນຜົນລະເມືອງລາວ ຫຼື ຕ່າງປະເທດ ຜູ້ທີ່ເຄື່ອນໄຫວຖືກຕ້ອງ ຕາມລະບຽບກົດ ໝາຍ, ມີຄວາມສາມາດ, ມີປະສົບປະການໃນການດ້ານວິຊາສະເພາະ ຫຼື ທຸລະກິດທີ່ໂດດເດັ່ນ ແລະ ເປັນບຸກຄົນທີ່ສັງຄົມຮັບຮູ້ ແລະ ໃຫ້ຄວາມເຄົາລົບນັບຖື, ມີຄວາມຕື່ນຕົວສະໝັກໃຈເຂົ້າ ເປັນສະມາຊິກຂອງສະມາຄົມ, ແຕ່ບໍ່ທັນມີມາດຕະຖານເງື່ອນໄຂຄົບຖ້ວນ ຫຼື ບໍ່ທັນໄດ້ຂຶ້ນທະບຽນວິສາຫະກິດ ທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ຂ. ສິດຂອງສະມາຊິກກິດຕິມະສັກຂອງ ສນກລ**

ສະມາຊິກກິດຕິມະສັກ ແມ່ນປະຕິບັດຕາມສິດທີ່ສະມາຊິກສາມັນທຸກຂໍ້ທີ່ລະບຸໄວ້ໃນມາດຕາ 16 ຍົກເວັ້ນ ຂໍ້ ຂ.2 ບໍ່ມີສິດໃນການເລືອກຕັ້ງ, ສະໝັກຮັບເລືອກຕັ້ງ ຫຼື ແຕ່ງຕັ້ງ ເຂົ້າເປັນຄະນະບໍລິຫານຂອງ ສນກລ ແລະ ບໍ່ມີສິດອອກຄະແນນສຽງລົງມະຕິຕ່າງໆໃນກອງປະຊຸມຂອງ ສນກລ

**ມາດຕາ 19: ໜ້າທີ່ຂອງສະມາຊິກຂອງ ສນກລ**

1. ເຮັດໜ້າທີເປັນຕົວແທນຂອງ ສນກລ ໃນການເຜີຍແຜ່ໂຄສະນາຂໍ້ມູນຂ່າວສານ ແລະ ກິດຈະກຳຂອງ ສນກລ ໃນທາງທີ່ດີໃຫ້ສັງຄົມພາຍໃນ ແລະ ສາກົນໄດ້ຮັບຮູ້;
2. ເຮັດໜ້າທີຕຳນີສິ່ງຂ່າວ ແລະ ຍ້ອງຍໍເພື່ອນສະມາຊິກດ້ວຍກັນ ເພື່ອສົ່ງເສີມ ແລະ ພັດທະນາເຊິ່ງກັນ;
3. ເຮັດໜ້າທີຊ່ວຍເຫຼືອສະມາຊິກຂອງ ສນກລ ໃນການເຮັດທຸລະກິດຂອງແຕ່ລະຄົນໃຫ້ໄດ້ຮັບຜົນປະໂຫຍດສູງສຸດ

**ມາດຕາ 20: ພັນທະຂອງສະມາຊິກຂອງ ສນກລ**

ພັນທະຂອງສະມາຊິກ ສນກລ ມີດັ່ງຕໍ່ໄປນີ້:

1. ຈ່າຍເງິນຄ່າລົງທະບຽນ ເປັນສະມາຊິກ ຄັ້ງລະ ສາມແສນ (300.000) ກີບ (ສະມາຊິກຂອງ ສນກລມີອາຍຸການສາມ (3) ປີ);
2. ຈ່າຍຄ່າບຳລຸງສະມາຊິກເຈັດແສນ (700,000) ກີບ ຕໍ່ປີ;
3. ປະກອບສ່ວນ ແລະ ສະໜັບສະໜູນ ວຽກງານສຳຄັນຂອງ ສນກລ.

**ມາດຕາ 21: ວິທີການສະໝັກເຂົ້າເປັນສະມາຊິກຂອງ ສນກລ**

ຜູ້ທີ່ມີຈຸດປະສົງຢາກເຂົ້າເປັນສະມາຊິກຂອງ ສນກລ ຕ້ອງຍື່ນໃບສະໝັກຕໍ່ຄະນະບໍລິຫານສະມາຄົມ. ຫຼັງຈາກໄດ້ຮັບໃບສະໝັກ ຫົວໜ້າຫ້ອງການສະມາຄົມຄົ້ນຄວ້າ ແລະ ສະເໜີຕໍ່ກອງປະຊຸມຄະນະບໍລິຫານສະມາຄົມ ເພື່ອພິຈາລະນາວ່າຈະຮັບ ຫຼື ບໍ່ຮັບເຂົ້າເປັນສະມາຊິກຂອງສະມາຄົມ. ເມື່ອຄະນະບໍລິຫານພິຈາລະນາ ແລ້ວ ຜົນອອກມາເປັນແນວໃດ ຫົວໜ້າຫ້ອງການສະມາຄົມ ເປັນຜູ້ແຈ້ງໃຫ້ຜູ້ສະໝັກຮັບຊາບ. ຖ້າຄະນະບໍລິຫານພິຈາລະນາອະນຸມັດໃຫ້ຜູ້ສະໝັກເຂົ້າເປັນສະມາຊິກ, ຜູ້ສະໝັກຕ້ອງຈ່າຍຄ່າລົງທະບຽນ

ແລະ ຄ່າບຳລຸງສະມາຄົມພາຍໃນສິບຫ້າ (15) ວັນ, ນັບແຕ່ມື້ທີ່ຮັບແຈ້ງການຈາກຫົວໜ້າຫ້ອງການສະມາຄົມ ແລະ ສະຖານະພາບໃນການເປັນສະມາຊິກຂອງຜູ້ສະໝັກ ໃຫ້ເລີ່ມນັບແຕ່ວັນທີຜູ້ສະໝັກໄດ້ຊຳລະຄ່າລົງທະບຽນ ແລະ ຄ່າບຳລຸງສະມາຄົມເປັນທີ່ຮຽບຮ້ອຍເປັນຕົ້ນໄປ, ແຕ່ຖ້າຫາກຜູ້ສະໝັກບໍ່ຊຳລະຄ່າລົງທະບຽນ ແລະ ຄ່າບຳລຸງສະມາຄົມ ພາຍໃຕ້ຂໍ້ກຳນົດ ຖືວ່າຍັງບໍ່ໄດ້ເປັນສະມາຊິກຂອງສະມາຄົມ.

**ມາດຕາ 22. ການຍົກເລີກ ຫຼື ຖອນສິດໃນການເປັນສະມາຊິກຂອງ ສນກລ**

ການຍົກເລີກ ຫຼື ຖອນສິດໃນການເປັນສະມາຊິກ ຂອງ ສນກລ ແມ່ນສະມາຊິກ ສາມາດແຈ້ງໃຫ້ກັບທາງ ສນກລ ໄດ້ຮັບຊາບ ເປັນລາຍລັກອັກສອນແຕ່ ບໍ່ສາມາດຮຽກຮ້ອງ ເງິນຄ່າລົງທະບຽນ ແລະ ຄ່າບຳລຸງສະມາຊິກ ກັບທາງ ສນກລ ຄືນໄດ້.

## ໝວດທີ IV
## ກອງປະຊຸມ ແລະ ມະຕິກອງປະຊຸມ

**ມາດຕາ 23. ຫລັກການເຄື່ອນໄຫວກອງປະຊຸມຂອງ ສນກລ**

ສນກລ ຕົກລົງນຳໃຊ້ກອງປະຊຸມໃນການປຶກສາຫາລື ວຽກທີ່ສຳຄັນ ແລະ ຕັດສິນບັນຫາຕ່າງໆ ຜ່ານມະຕິຂອງກອງປະຊຸມ, ກອງປະຊຸມຂອງ ສນກລ ມີ ສີ່ (4) ປະເພດ ແຕ່ລະປະເພດມີລາຍລະອຽດດັ່ງລຸ່ມນີ້:

1. ກອງປະຊຸມໃຫຍ່ສາມ (3) ປີຕໍ່ຄັ້ງ
2. ກອງປະຊຸມປະຈຳປີ
3. ກອງປະຊຸມຄົບຄະນະບໍລິຫານສະມາຄົມ
4. ກອງປະຊຸມຄະນະປະຈຳສະມາຄົມ

ນອກນັ້ນ ສນກລ ຍັງມີກອງປະຊຸມວິສະມັນ ທີ່ສາມາດເອີ້ນປະຊຸມໄດ້ໂດຍປະທານສະມາຄົມ ຖ້າຫາກເຫັນວ່າ ມີຄວາມຈຳເປັນ.

**ມາດຕາ 24: ກອງປະຊຸມໃຫຍ່ຂອງ ສນກລ**

ກອງປະຊຸມໃຫຍ່ ຂອງ ສນກລ ແມ່ນກອງປະຊຸມເປີດກວ້າງທີ່ມີຄະນະບໍລິຫານ, ສະມາຊິກ ຫລື ຕົວແທນຂອງສະມາຊິກ ແລະ ແຂກທີ່ຖືກເຊີນຈາກພາຍນອກເຂົ້າຮ່ວມ. ກອງປະຊຸມໃຫຍ່ແມ່ນກຳນົດຈັດ ສາມ (3) ປີຕໍ່ຄັ້ງ ເພື່ອພິຈາລະນາ ແລະ ຮັບຮອງເອົາແຜນການດຳເນີນງານຂອງສະມາຄົມ ເຊັ່ນ:

1. ລາຍງານບົດສະຫຼຸບການຈັດຕັ້ງປະຕິບັດແຜນງານ-ງົບປະມານ, ການກວດສອບບັນຊີ ແລະ ຄວາມໂປ່ງໃສ ຂອງຄະນະບໍລິຫານໃນໄລຍະຜ່ານມາ ໃຫ້ແກ່ສະມາຊິກໄດ້ຮັບຊາບ;
2. ສະເໜີ ແລະ ຮັບຮອງ ແຜນຍຸດທະສາດ, ລະບຽບໃໝ່, ແຜນດຳເນີນງານ, ແຜນງົບປະມານ, ແຜນການກວດສອບບັນຊີຂອງສະມາຄົມໃນສາມ (3) ປີ ຕໍ່ໜ້າ;
3. ເປັນເວທີໃຫ້ແກ່ສະມາຊິກໄດ້ຍົກບັນຫາຂອງຕົນ, ໄດ້ຕຳນິສິ່ງຂ່າວ, ຍ້ອງຍໍການດຳເນີນງານຂອງຄະນະບໍລິຫານ ແລະ ຄະນະກວດກາ ຂອງ ສນກລ;
4. ເລືອກຕັ້ງຄະນະບໍລິຫານ, ຄະນະກວດກາ, ຄະນະປະຈຳ ຂອງ ສນກລ ຊຸດໃໝ່;
5. ຮັບຮອງເອົາມະຕິຂອງກອງປະຊຸມໃຫຍ່.

**ມາດຕາ 25: ກອງປະຊຸມປະຈຳປີຂອງ ສນກລ**

ກອງປະຊຸມປະຈຳປີ ຂອງ ສນກລ ແມ່ນກອງປະຊຸມສະຫລຸບຜົນງານການເຄື່ອນໄຫວວຽກງານການຈັດຕັ້ງປະຕິບັດໃນໄລຍະໜຶ່ງ (1) ປີຜ່ານມາ ໂດຍມີປະທານ, ຄະນະບໍລິຫານ ແລະ ຄະນະກວດກາ ພ້ອມດ້ວຍສະມາຊິກຂອງ ສນກລ ເຂົ້າຮ່ວມເກີນເຈັດສິບ (70) ສ່ວນຮ້ອຍ ເພື່ອເຮັດໜ້າທີ່ ດັ່ງນີ້:

1. ລາຍງານບົດສະຫຼຸບການຈັດຕັ້ງປະຕິບັດແຜນງານ-ງົບປະມານໃນໄລຍະໜຶ່ງ (1) ປີຜ່ານມາ ພ້ອມນຳສະເໜີແຜນຍຸດທະສາດໃຫ້ແກ່ສະມາຊິກໄດ້ຮັບຊາບ;
2. ຄະນະກວດກາລາຍງານຜົນການປະເມີນການປະຕິບັດງານ, ການກວດສອບບັນຊີ ແລະ ຄວາມໂປ່ງໃສ ຂອງຄະນະບໍລິຫານ;
3. ເປັນເວທີໃຫ້ສະມາຊິກໄດ້ຍົກບັນຫາຂອງຕົນ, ໄດ້ຕຳນິສິ່ງຂ່າວ ແລະ ຍ້ອງຍໍຕໍ່ການດຳເນີນງານຂອງ ສນກລ.

**ມາດຕາ 26: ກອງປະຊຸມຄະນະບໍລິຫານຂອງ ສນກລ**

ກອງປະຊຸມຄະນະບໍລິຫານຂອງ ສນກລ ແມ່ນກອງປະຊຸມຄົບຄະນະສະເພາະແຕ່ຄະນະບໍລິຫານ, ຊຶ່ງຈັດຂຶ້ນສອງ (2) ຄັ້ງຕໍ່ປີ (6 ເດືອນຕໍ່ 1 ຄັ້ງ) ເພື່ອເຮັດໜ້າທີ່:

1. ສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດໃນຮອບຫົກ (6) ເດືອນທີ່ຜ່ານມາ;
2. ສະເໜີແຜນງານການຈັດຕັ້ງປະຕິບັດສຳລັບຫົກ (6) ເດືອນຕໍ່ໜ້າ;
3. ເປັນເວທີໃຫ້ຄະນະບໍລິຫານປະກອບຄຳເຫັນ, ຍົກບັນຫາຂອງຕົນຕໍ່ກອງປະຊຸມ ເພື່ອຄວາມເປັນເອກະພາບ.

**ມາດຕາ 27: ກອງປະຊຸມຄະນະປະຈຳຂອງ ສນກລ**

ກອງປະຊຸມຄະນະປະຈຳຂອງ ສນກລ ແມ່ນກອງປະຊຸມຂອງຄະນະທີ່ຖືກແຕ່ງຕັ້ງເປັນຄະນະປະຈຳເທົ່ານັ້ນ, ກອງປະຊຸມຄະນະປະຈຳຈັດຂຶ້ນປະຈຳທຸກເດືອນ, ເພື່ອພິຈາລະນາ, ຈັດຕັ້ງປະຕິບັດແຜນງົບປະມານທີ່ໄດ້ຖືກຮັບຮອງຈາກກອງປະຊຸມຄະນະບໍລິຫານ ແລະ ແຜນວຽກປະຈຳວັນຂອງສະມາຄົມ.

## ໝວດທີ V
## ການເງິນ ຂອງ ສະມາຄົມ ສົ່ງເສີມຜູ້ປະກອບກິດຈະການ ວິສາຫະກິດ ຂະໜາດນ້ອຍ ແລະ ກາງລາວ

**ມາດຕາ 28. ຫຼັກການຄຸ້ມຄອງທາງດ້ານການເງິນ**

ກ. ສນກລ ມີງົບປະມານເປັນຂອງຕົນເອງ ເຊິ່ງໄດ້ຮັບຈາກ:

- ການປະກອບທຶນຂອງຄະນະບໍລິຫານ ແລະ ສະມາຊິກຂອງ ສນກລ;
- ເງິນບໍລິຈາກ ຫຼື ເງິນປະກອບສ່ວນຈາກພາຍນອກ ຫຼື ການຊ່ວຍເຫຼືອຈາກພາກລັດ, ອົງການຈັດຕັ້ງສາກົນ, ສັງຄົມ ແລະ ລາຍຮັບຈາກການບໍລິການ ຫຼື ກິດຈະກຳ ທີ່ຖືກຕ້ອງຕາມລະບຽບກົດໝາຍ.
- ດອກເບັ້ຍເງິນຝາກຈາກທະນາຄານ ທີ່ສະມາຄົມເປີດບັນຊີ ແລະ ຝາກເງິນໄວ້.

**ຂ. ການເງິນ, ໜີ້ສິນ ແລະ ຊັບສິນ ຂອງສະມາຄົມ** ແມ່ນມີການຄຸມຄອງດັ່ງນີ້:

- ການເງິນ, ໜີ້ສິນ ແລະ ຊັບສິນທັງໝົດ ແມ່ນຢູ່ໃນຄວາມຮັບຜິດຊອບຂອງຄະນະບໍລິຫານ.
- ການຄຸ້ມຄອງການເງິນ, ໜີ້ສິນ ແລະ ຊັບສິນຂອງສະມາຄົມ ລວມທັງຄັງເງິນສົດ, ເງິນຝາກທະນາຄານ ແລະ ຊັບສິນອື່ນໆທີ່ຄ້າຍຄືເງິນສົດ ແມ່ນປະຕິບັດຕາມລະບຽບການຄຸ້ມຄອງການເງິນ-ງົບປະມານຂອງສະມາຄົມ ສນກລ ໂດຍບໍ່ຂັດຕໍ່ກົດໝາຍບັນຊີ ແລະ ດຳລັດນາຍົກລັດຖະມົນຕີວ່າດ້ວຍສະມາຄົມ ສະບັບເລກທີ 238/ ລບ, ລົງວັນທີ 11 ສິງຫາ 2017.

**ຄ. ກຳນົດສິດໃນການສັ່ງຈ່າຍ**

ການໃຊ້ຈ່າຍຂອງສະມາຄົມ ແມ່ນປະຕິບັດຕາມແຜນງົບປະມານລາຍຈ່າຍປະຈຳປີ ຂອງ ສນກລ ທີ່ຖືກຮັບຮ້ອງໂດຍກອງປະຊຸມປະຈຳປີຂອງຄະນະບໍລິຫານ ສນກລ, ເຊິ່ງຈະປະກອບມີ: ຮ່ວງລາຍຈ່າຍ ປົກກະຕິ ແລະ ບໍ່ປົກກະຕິ ທີ່ໄດ້ກຳນົດສິດຜູ້ສັ່ງຈ່າຍດັ່ງລຸ່ມນີ້:

- ຫົວໜ້າຄະນະປະຈຳສະມາຄົມມີສິດສັ່ງຈ່າຍເງິນຂອງສະມາຄົມບໍ່ເກີນໜຶ່ງລ້ານ (1.000.000) ກີບຕໍ່ຄັ້ງ ຕາມຮ່ວງລາຍຈ່າຍ ປົກກະຕິ;

- ຫົວໜ້າຄະນະປະຈຳສະມາຄົມຮ່ວມກັບຮອງຫົວໜ້າຄະນະປະຈຳໜຶ່ງຄົນມີສິດສັ່ງຈ່າຍເງິນຂອງສະມາຄົມ ເກີນກວ່າໜຶ່ງລ້ານ (1.000.000) ກີບ ແຕ່ບໍ່ກາຍຫ້າລ້ານ (5.000.000) ກີບຕໍ່ຄັ້ງ ຕາມຮ່ວງລາຍຈ່າຍປົກກະຕິ;
- ຫົວໜ້າຄະນະປະຈຳສະມາຄົມຮ່ວມຮອງຫົວໜ້າຄະນະປະຈຳສອງຄົນມີສິດສັ່ງຈ່າຍເງິນຂອງສະມາຄົມ ຫ້າລ້ານ (5.000.000) ກີບຂຶ້ນໄປຕາມຮ່ວງລາຍຈ່າຍປົກກະຕິ;
- ຫົວໜ້າຫ້ອງການມີສິດສັ່ງຈ່າຍເງິນຂອງສະມາຄົມບໍ່ເກີນຫ້າແສນ (500.000) ກີບຕໍ່ຄັ້ງຕາມຮ່ວງລາຍຈ່າຍປົກກະຕິ;
- ສຳລັບການສັ່ງຈ່າຍໃນຮ່ວງລາຍຈ່າຍບໍ່ປົກກະຕິ ແມ່ນຕ້ອງໄດ້ຮັບການເຫັນດີຈາກກອງປະຊຸມຄະນະປະຈຳສະມາຄົມ ຫົວໜ້າຄະນະປະຈຳຈຶ່ງສາມາດສັ່ງຈ່າຍໄດ້;
- ນາຍຄັງມີສິດຮັກສາເງິນສົດໄດ້ບໍ່ເກີນໜຶ່ງລ້ານ (1,000,000) ກີບ (ຖ້າເກີນກວ່າຈຳນວນນີ້ ຈະຕ້ອງນຳໄປຝາກທະນາຄານໃນບັນຊີຂອງສະມາຄົມ ພາຍໃນຫ້າ (5) ວັນ);
- ນາຍຄັງ ແລະ ຮອງນາຍຄັງຈະຕ້ອງເຮັດສະຫຼຸບບັນຊີລາຍຮັບລາຍຈ່າຍ ແລະ ບັນຊີງົບປະມານໃຫ້ຖືກຕ້ອງຕາມຫຼັກການ ວິຊາການ ແລະ ຕ້ອງໄດ້ຮັບການເຊັນຢັ້ງຢືນຄວາມຖືກຕ້ອງໂດຍຫົວໜ້າຄະນະປະຈຳສະມາຄົມ ແລະ ຫົວໜ້າຫ້ອງການ ຕາມກົດລະບຽບການເງິນ ແລະ ງົບປະມານຂອງ ສະມາຄົມ.

**ມາດຕາ 29. ລາຍຈ່າຍຂອງ ສນກລ**

ລາຍຈ່າຍຂອງ ສນກລ ແມ່ນລາຍຈ່າຍທີ່ຕິດພັນກັບການບໍລິຫານວຽກງານຂອງ ສນກລ ເຊັ່ນ: ຄ່າເງິນເດືອນພະນັກງານຫ້ອງການຂອງ ສນກລ (ຄະນະບໍລິຫານ, ຄະນະປະຈຳ, ຄະນະທີ່ປຶກສາ ຈະບໍ່ມີເງິນເດືອນ), ຄ່າເຊົ່າຫ້ອງການ, ຄ່າໄຟຟ້າ, ນໍ້າປະປາ, ຄ່າບໍລິຫານຫ້ອງການເປັນຕົ້ນ.

**ມາດຕາ 30: ຊັບສິນ ແລະ ໜີ້ສິນ**

1. **ຊັບສິນ** : ຊັບສິນຂອງ ສນກລ ແມ່ນຊັບສິນບັດທີ່ໄດ້ມາຈາກການຊື້, ການປະກອບທຶນຂອງຄະນະບໍລິຫານ, ສະມາຊິກ, ການຮັບບໍລິຈາກ ຈາກອົງການຈັດຕັ້ງລັດ, ອົງການຈັດຕັ້ງສາກົນ ໃນຮູບແບບເງິນສົດ ແລະ ວັດຖຸ.
2. **ໜີ້ສິນ** : ໜີ້ສິນຂອງ ສນກລ ແມ່ນ ໜີ້ສິນຕໍ່ຜູ້ສະໜອງສິນຄ້າ ແລະ ການບໍລິການໃຫ້ແກ່ ສນກລ ຕາມແຜນງານທີ່ໄດ້ຮັບຮອງຈາກກອງປະຊຸມຂອງຄະນະປະຈຳ ແລະ ຄະນະບໍລິຫານ.

**ມາດຕາ 31: ການກວດກາ ແລະ ກວດສອບບັນຊີ**

1. ຜູ້ກວດກາການຄຸ້ມຄອງການເງິນຈະຕ້ອງແມ່ນຄະນະກວດກາຂອງສະມາຄົມຮັບຜິດຊອບກວດກາຄະນະປະຈຳໃນການນຳໃຊ້ງົບປະມານ ແລະ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງການເງິນ ວ່າມີຄວາມຖືກຕ້ອງຕາມກົດລະບຽບຂອງສະມາຄົມ ແລະ ລະບຽບການຍ່ອຍທີ່ກຳນົດສະເພາະວຽກການເງິນທີ່ຜ່ານການຮັບການຮັບຮອງຈາກກອງປະຊຸມຂອງຄະນະບໍລິຫານ;
2. ຜູ້ກວດສອບບັນຊີ ຈະຕ້ອງແມ່ນຄະນະກວດກາ ຫຼື ນັກກວດສອບບັນຊີອິດສະຫຼະ ທີ່ຖືກແຕ່ງຕັ້ງຜ່ານການເຫັນດີຈາກກອງປະຊຸມຂອງຄະນະບໍລິຫານ. ສຳຫຼັບຂອບເຂດສິດ, ໜ້າທີ ແລະ ຂໍ້ກຳນົດຕໍ່ຜູ້ກວດສອບບັນຊີ ແມ່ນຈະໄດ້ກຳນົດລະອຽດໃນກົດລະບຽບການເງິນ ແລະ ງົບປະມານຂອງສະມາຄົມ;
3. ບົດລາຍງານການກວດກາ ແລະ ບົດລາຍງານການກວດສອບບັນຊີຕ້ອງໄດ້ເຊັນຮັບຮອງໂດຍປະທານກວດກາ ແລະ ຕ້ອງໄດ້ລາຍງານໃນກອງປະຊຸມໃຫຍ່ ແລະ ກອງປະຊຸມປະຈຳປີຂອງສະມາຄົມ.

## ໝວດທີ VI

## ການປັບປຸງປ່ຽນແປງກົດລະບຽບ ແລະ ການຍຸບເລີກສະມາຄົມ

**ມາດຕາ 32: ການປັບປຸງປ່ຽນແປງກົດລະບຽບ**

ກົດລະບຽບຂອງສະມາຄົມສາມາດປັບປຸງ, ແກ້ໄຂ ແລະ ປ່ຽນແປງໄດ້ໂດຍມະຕິຂອງກອງປະຊຸມໃຫຍ່ຂອງສະມາຄົມ ແລະ ມີຜົນບັງຄັບໃຊ້ຫຼັງຈາກລັດຖະມົນຕີກະຊວງອຸດສາຫະ ແລະ ການຄ້າ ຮັບຮອງເອົາຢ່າງເປັນທາງການ.

**ມາດຕາ 33: ການຍຸບເລີກສະມາຄົມ**

ສະມາຄົມຈະຍຸບເລີກໄດ້ໂດຍມະຕິກອງປະຊຸມໃຫຍ່ຂອງສະມາຄົມ ແລະ ການຮັບຮອງຈາກອົງການອຳນາດລັດທີ່ກ່ຽວຂ້ອງ ທີ່ອະນຸມັດສ້າງຕັ້ງ ແລະ ຮັບຮອງ.

ເມື່ອສະມາຄົມມີການຍຸບເລີກດ້ວຍເຫດຜົນໃດກໍ່ຕາມ, ການເງິນ ແລະ ຊັບສິນ ຂອງສະມາຄົມກໍ່ຕ້ອງໄດ້ແບ່ງອອກເປັນສາມ (3) ແບບຄື:

1. ຖ້າກໍລະນີຊັບສິນຫຼາຍກວ່າໜີ້ສິນ ຕ້ອງໄດ້ແບ່ງອອກເປັນສີ່ (4) ສ່ວນ ເທົ່າກັນ,ສອງສ່ວນມອບໃຫ້ຄະນະປະທານ ແລະ ສອງສ່ວນມອບໃຫ້ຄະນະບໍລິຫານ;
2. ຖ້າຫາກ ໜີ້ສິນຫຼາຍກວ່າສັບສິນ ຄະນະບໍລິຫານຕ້ອງໄດ້ຮັບຜິດຊອບນຳກັນໂດຍແມ່ນຄະນະປະທານຮັບຜິດຊອບສອງສ່ວນ ແລະ ອີກສອງສ່ວນແມ່ນຄະນະບໍລິຫານ;
3. ໃນກໍລະນີຈະໂອນໃຫ້ສະມາຄົມ ແລະ ມູນນິທິອື່ນໆທີ່ມີຈຸດປະສົງເຄື່ອນໄຫວຄ້າຍຄືກັນ ຫຼື ມອບໃຫ້ລັດຕ້ອງໄດ້ຜ່ານກອງປະຊຸມຄະນະບໍລິຫານຕົກລົງເປັນເອກະພາບກັນສາກ່ອນ.

## ໝວດທີ VII

## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 34: ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນເຂົ້າໃນການຈັດຕັ້ງປະຕະບັດວຽກງານຂອງສະມາຄົມສົ່ງເສີມຜູ້ປະກອບກິດຈະການ ວິສາຫະກິດ ຂະໜາດນ້ອຍ ແລະ ກາງລາວຢ່າງມີປະສິດຕິຜົນຈະໄດ້ຮັບການຍ້ອງຍໍ ແລະ ຊົມເຊີຍ ຫຼື ນະໂຍບາຍອື່ນໆ ຕາມລະບຽບການ.

**ມາດຕາ 35: ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດລະບຽບ ກ່ຽວກັບ ສະມາຄົມ ສົ່ງເສີມ ຜູ້ປະກອບກິດຈະການ ວິສາຫະກິດ ຂະໜາດນ້ອຍ ແລະ ກາງລາວ ເປັນຕົ້ນ ຂໍ້ຫ້າມຕ່າງໆຈະຖືກກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ ຫຼື ລົງໂທດ ຕາມລະບຽບກົດໝາຍ.

## ໝວດທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 36: ການຈັດຕັ້ງປະຕິບັດ**

ມອບໃຫ້ຄະນະບໍລິຫານ, ຄະນະກວດກາ ແລະ ບັນດາສະມາຊິກ ສນກລ, ເຊື່ອມຊຶມ, ກຳແໜ້ນຈັດຕັ້ງປະຕິບັດຕາມກົດລະບຽບສະບັບນີ້ໃຫ້ໄດ້ຮັບປະສິດທິຜົນ ແລະ ສະຫຼຸບລາຍງານສະພາບການເຄື່ອນໄຫວຂອງສະມາຄົມໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ (ກົມການຄ້າພາຍໃນ) ພ້ອມສຳເນົາໃຫ້ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ຢ່າງໜ້ອຍໜຶ່ງຄັ້ງຕໍ່ປີ.

**ມາດຕາ 37: ຜົນສັກສິດຂອງກົດລະບຽບ ສນກລ**

ກົດລະບຽບ ຂອງ ສນກລ ສະບັບນີ້ ປະກອບດ້ວຍ 8 ໝວດ ແມ່ນຖືກຮັບຮອງໂດຍກອງປະຊຸມໃຫຍ່ຂອງ ສນກລ, ເຊິ່ງຈັດຂຶ້ນໃນ ວັນທີ 1 ສິງຫາ 2020 ແລະ ມີຜົນບັງຄັບໃຊ້ ໂດຍອີງຕາມຂໍ້ຕົກລົງຮັບຮອງຂອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ ............................., ລົງວັນທີ ........................ເປັນຕົ້ນໄປ.

ທີ່ ນະຄອນຫລວງວຽງຈັນ, ວັນທີ 11 SEP 2020

**ປະທານກອງປະຊຸມໃຫຍ່**

**ສະມາຄົມ ສົ່ງເສີມຜູ້ປະກອບກິດຈະການ ວິສາຫະກິດ**

**ຂະໜາດນ້ອຍ ແລະ ກາງລາວ**

.................................................................

ຊື່: ລິດທິໄກ ພູມມະສັກ